ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ: 1501/ກປ

ນະຄອນຫຼວງວຽງຈັນ, ວັນທີ 23 JUN 2011

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ຕິດຕາມ ປ້ອງກັນ ແລະ ສະກັດກັ້ນການລະບາດຂອງເພ້ຍແປ້ງມັນຕົ້ນ

ເຖິງ:
- ທ່ານຫົວໜ້າກົມ, ກອງ, ສະຖາບັນ ແລະ ໂຄງການຕ່າງໆອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້;
- ທ່ານຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງ;
- ທ່ານຫົວໜ້າດ່ານປ້ອງກັນພືດຊາຍແດນ.

- ອີງຕາມກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 0661/ກປຝ, ລົງວັນທີ 31 ພຶດສະພາ 2011.

ການປູກມັນຕົ້ນຢູ່ປະເທດ ຂອງພວກເຮົາກຳລັງໄດ້ຮັບການຊຸກຍູ້ສົ່ງເສີມຢ່າງແຂງແຮງ, ການຜະລິດມີທ່າຂະຫຍາຍຕົວໃນທົ່ວປະເທດ ທັງທາງດ້ານຄຸນນະພາບ ແລະ ປະລິມານ ໂດຍຕິດພັນກັບການຄ້ຳປະກັນສະບຽງອາຫານ, ສ້າງລາຍຮັບຂອງຄອບຄົວຊາວຊົນນະບົດ ແລະ ການຕອບສະໜອງວັດຖຸດິບໃຫ້ໂຮງງານປຸງແຕ່ງກະສິກຳ. ໃນໄລຍະຕົ້ນລະດູຝົນປີນີ້ ໄດ້ມີປະກົດການລະບາດເພ້ຍແປ້ງ ຊຶ່ງອາໄສດູດກິນນ້ຳລ້ຽງຕົ້ນພືດເປັນອາຫານ ເຮັດໃຫ້ຕົ້ນພືດອ່ອນເພຍ ແລະ ຕາຍ ຢູ່ພື້ນທີ່ປູກມັນຕົ້ນ ຂອງປະເທດໃກ້ຄຽງເປັນບໍລິເວນກວ້າງພໍສົມຄວນ ແລະ ກຳລັງມີທ່າອ່ຽງເພີ້ມຄວາມຮຸນແຮງຂຶ້ນ ຊຶ່ງໄດ້ທຳລາຍເນື້ອທີ່ສວນປູກມັນຕົ້ນແລ້ວ ຫຼາຍພັນເຮັກຕາ.

ໃນລະດູຝົນປີນີ້ ສະພາບດິນຟ້າອາກາດຂອງປະເທດພວກເຮົາ ອາດສາມາດປ່ຽນແປງໃຫ້ເກີດຄວາມເໝາະສົມ ແລະ ເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວ ແຜ່ພັນຂອງເພ້ຍແປ້ງມັນຕົ້ນທາງດ້ານປະລິມານ ແລະ ແຜ່ລາມໄປສູ່ພື້ນທີ່ອື່ນໄດ້ໄວ. ອີກດ້ານໜຶ່ງ, ຢູ່ປະເທດຂອງພວກເຮົາ, ໄດ້ມີການແລກປ່ຽນ ແລະ ນຳເຂົ້າແນວພັນປັບປຸງ (ງ່າພັນດີ) ມັນຕົ້ນ ມາຈາກປະເທດໃກ້ຄຽງເປັນຈຳນວນບໍ່ໜ້ອຍ ດ້ວຍຫຼາຍຮູບການ ຊຶ່ງສາມາດເປັນຊ່ອງຫວ່າງ ຫລື ໂອກາດສ່ຽງຕໍ່ການແຜ່ຂະຫຍາຍຂອງເພ້ຍແປ້ງ. ສະນັ້ນ, ເພື່ອກະກຽມ ການປ້ອງກັນ ແລະ ຮັບມື ກັບບັນຫາດັ່ງກ່າວ,